ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 1240/ທຄຕລ.2025
ນະຄອນຫຼວງວຽງຈັນ, ວັນທີ: 28 APR 2025

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ ຕົວແທນຈຳໜ່າຍພາຫະນະ ພາຍໃນ ນະຄອນຫຼວງວຽງຈັນ ທີ່ນັບຖື.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນ ພາຫະນະ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງເຊີນມາຍັງທ່ານຜູ້ສະໜອງ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນລາຄາ ພາຫະນະ ເພື່ອນຳໃຊ້ເຂົ້າໃນວຽກງານຂອງ ທຄຕລ. ດັ່ງນັ້ນ, ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນ ດັ່ງມີລາຍລະອຽດລຸ່ມນີ້:

| ລ/ດ | ລາຍລະອຽດ | | ຈຳນວນ |
|---|---|---|---|
| 1 | **ລົດຕູ້**<br>ລົດຕູ້, ຍີ່ຫໍ້ Toyota, 14 ບ່ອນນັ່ງຂຶ້ນໄປ, ຂັບເຄື່ອນ 2 ລໍ້, ຫຼັງຄາສູງ, ພວງມະໄລຊ້າຍເດີມ, ເຄື່ອງຈັກ 4 ສູບ, ຄວາມແຮງ 2.500-2800 ຊີຊີ, ເກຍໂອໂຕ, ສີຂາວມຸກ | | 06 ຄັນ |
| 2 | **ລົດຕູ້ ALPHARD**<br>ລົດຕູ້ ຍີ່ຫໍ້ Toyota ALPHARD, ພວງມະໄລຊ້າຍເດີມ, 7 ບ່ອນນັ່ງ, 5 ປະຕູ (ປະຕູເລື່ອນ2 ຂ້າງ) ຄວາມແຮງ 3.500 ຊີຊີ, 6 ສູບ, 24 ວາວ. ເກຍໂອໂຕ, ສີຂາວມຸກ | | 01 ຄັນ |
| 3 | **ລົດກະບະ**<br>ລົດກະບະ ຍີ່ຫໍ້ Toyota, 4 ປະຕູ, ລຸ້ນສູງ, ຂັບເຄື່ອນ 4 ລໍ້, ພວງມະໄລຊ້າຍເດີມ, ຄວາມແຮງ 2.000 ຊີຊີ ຂຶ້ນໄປ, ສີຂາວມຸກ | ເກຍກະປຸກ | 01 ຄັນ |
| | | ເກຍໂອໂຕ | 04 ຄັນ |

- **ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍພາຫະນະ ທີ່ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

❖ **<u>ເອກະສານ ຊອງທີ1:</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດກ່ຽວກັບຈຳໜ່າຍພາຫະນະ, ດຳເນີນທຸລະກິດຢ່າງໜ້ອຍ 03 ປີຂຶ້ນໄປ, ພ້ອມທັງສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນ 3 ປີ (ປີ 2021, 2022, 2023) ແລະ ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ (ຖ້າມີ).
2. ກຳນົດຍື່ນຊອງລາຍລະອຽດສະເປັກລົດ, ການຮັບປະກັນສິນຄ້າ, ປີຜະລິດລົດ, ໄລຍະເວລາໃນການຈັດສົ່ງ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້ ແລະ ຍື່ນກ່ອນ **ວັນທີ 05/05/2025 ເວລາ 11:00 ໂມງ** ໂດຍການສົ່ງຟາຍເຂົ້າ E-mail: <u>procurement@bcel.com.la</u>

❖ **<u>ເອກະສານ ຊອງທີ2:</u> (ປິດຊອງ)**

1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າອາກອນມູນຄ່າເພີ່ມ ໂດຍລະບຸເປັນ 02 ສະກຸນ: ກີບ ແລະ ໂດລາ.
2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານທຸລະກິດພາຍໃນ ສປປ ລາວ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ**

**20/06/2025)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄໍ້າປະກັນດັ່ງກ່າວຄືນ.

3. ໃນວັນອັງຄານ **ວັນທີ 20/05/2025 ເວລາ 9:00 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ຕ້ອງມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມ ທີ່ ຫ້ອງປະຊຸມ ຊັ້ນ 5 ອາຄານ C.

- **<u>ໝາຍເຫດ:</u>** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ. ການຄັດເລືອກຜູ້ສະໜອງ ແມ່ນຈະໄດ້ຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).
- **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**
  - ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
  - ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າທີ່ຊະນະການປະມູນ.
  - ພາຍຫຼັງທີ່ເຊັນສັນຍາແລ້ວ ກໍລະນີຜູ້ສະໜອງບໍ່ສາມາດສະໜອງສິນຄ້າໄດ້ຕາມສະເປັກ ຫຼື ເວລາທີ່ກຳນົດ ທຄຕລ ຈະປັບໄໝ 0,5%ຕໍ່ວັນ ສູງສຸດ 20% ຂອງມູນຄ່າສັນຍາທັງໝົດ.
- **ການຊຳລະຈະຈ່າຍເປັນງວດດຽວ 100 %** ຂອງມູນຄ່າ ພາຍໃນ 20 ວັນລັດຖະການ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ ແລະ ໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

**ນ. ສາຍສະໝອນ ຈັນທະຈັກ**

ຕິດຕໍ່: 021 213 200 ຕໍ່ 621

**(ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)**

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ .......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດໍາເນີນທຸລະກິດ | ໄລຍະເວລາໃນການດໍາເນີນທຸລະກິດ | ໃບອະນຸຍາດເປັນຕົວແທນ | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ການຮັບປະກັນສິນຄ້າ | ກໍານົດສົ່ງ (ວັນ) | |
| 1 | ບ/ສ......... | (ເລກທີ/ 02.01.2015) | (ເລກທີ/ 02.01.2015) | (ເລກທີ/ 02.01.2015) | .... ປີ | (ໃຫ້ລະບຸ) | | .... ປີ | ...... | (ຖ້າມີຂອງແຖມແມ່ນໃຫ້ລະບຸເລີຍ ເຊັ່ນ: ປະກັນໄພ, ຕິດຟີມ, ອື່ນໆ.......) |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ............................

ຜູ້ອໍານວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: